ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 21 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17/01/2012

# ແຈ້ງການ

**ເຖິງ** : ຜູ້ອໍານວຍການທະນາຄານທຸລະກິດ, ຜູ້ຈັດການສາຂາທະນາຄານຕ່າງປະເທດ.

**ເລື່ອງ** : ການປ້ອງກັນຮັກສາຄວາມປອດໄພ ຂອງທະນາຄານທຸລະກິດ.

ໂດຍປະຕິບັດຕາມຈິດໃຈຂອງກອງປະຊຸມ ຄັ້ງວັນທີ 01 ພະຈິກ 2011 ກ່ຽວກັບວຽກງານປ້ອງກັນຮັກສາຄວາມປອດໄພຂອງທະນາຄານທຸລະກິດ, ເພື່ອຮັບປະກັນຄວາມປອດໄພ ຂອງທະນາຄານທຸລະກິດທົ່ວລະບົບ ທະນາຄານແຫ່ງ ສປປ ລາວ ອອກແຈ້ງການມາຍັງທະນາຄານທຸລະກິດລວມທັງສາຂາທະນາຄານຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ດັ່ງນີ້:

1. ໃຫ້ທະນາຄານທຸລະກິດ, ສາຂາທະນາຄານຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ໃຫ້ກວດກາ ແລະ ປັບປຸງປ່ອງບໍລິການຂອງຕົນ ໃຫ້ມີຄວາມປອດໄພ, ດ້ວຍການຕິດຕັ້ງໂຄງເຫຼັກ ແລະ ແກ້ວທີ່ໄດ້ມາດຕະຖານ, ບໍ່ໃຫ້ຜູ້ມາໃຊ້ບໍລິການທະນາຄານ ສາມາດເຂົ້າເຖິງເບື້ອງໃນເຖິງຜູ້ໃຫ້ບໍລິການໄດ້ໂດຍກົງ, ສໍາລັບປະຕູ ເຂົ້າ-ອອກ ຂອງພະນັກງານທະນາຄານຜູ້ໃຫ້ບໍລິການຕ້ອງຮັບປະກັນ ແລະ ສາມາດ ເຂົ້າ-ອອກໄດ້ສະເພາະພະນັກງານທະນາຄານເທົ່ານັ້ນ. ບັນດາທະນາຄານຕ້ອງກວດກາ ແລະ ປັບປຸງປ່ອງບໍລິການຂອງຕົນໃຫ້ສໍາເລັດພາຍໃນເດືອນ 01 ປີ 2012.
2. ໃຫ້ກວດກາຄືນລະບົບຮັກສາຄວາມປອດໄພເຊັ່ນ: ລະບົບກ້ອງວົງຈອນປິດ ທັງພາຍໃນ ແລະ ພາຍນອກສໍານັກງານ, ລະບົບປ້ອງກັນອັກຄີໄພຕ້ອງຄົບຖ້ວນຮັບປະກັນສາມາດໃຊ້ງານໄດ້ຕະຫຼອດເວລາ. ໃນແຕ່ລະປີຕ້ອງມີການທົດສອບຝຶກຊ້ອມ ການປ້ອງກັນອັກຄີໄພ ໂດຍສົມທົບກັບກໍາລັງດັບເພີງ, ຕ້ອງມີລະບົບໄຟຟ້າສໍາຮອງ (ຈັກໄຟຟ້າ) ເພື່ອນໍາໃຊ້ເວລາສຸກເສີນ ແລະ ລະບົບນໍ້າທີ່ພຽງພໍ ເພື່ອຕອບສະໜອງວຽກງານປ້ອງກັນອັກຄີໄພ.
3. ໃຫ້ຕິດຕັ້ງລະບົບແຈ້ງເຫດສຸກເສີນລະຫວ່າງທະນາຄານທຸລະກິດ ແລະ ກໍາລັງປ້ອງກັນຄວາມສະຫງົບ ເພື່ອຮັບປະກັນເມື່ອມີເຫດຮ້າຍເກີດຂຶ້ນ ສາມາດຕິດຕໍ່ລາຍງານເຈົ້າໜ້າທີ່ປ້ອງກັນຄວາມສະຫງົບໄດ້ຢ່າງທັນການ.
4. ໃຫ້ບັນດາທະນາຄານທຸລະກິດ, ສາຂາທະນາຄານຕ່າງປະເທດ ສົມທົບກັບກໍາລັງປ້ອງກັນຄວາມສະຫງົບ ເພື່ອຂໍກໍາລັງຮັກສາຄວາມປອດໄພສໍານັກງານທະນາຄານ. ສໍາລັບເງິນນະໂຍບາຍຂອງທະນາ

ຄານຕໍ່ການລັງປ້ອງກັນຄວາມສະຫງົບ ແມ່ນໃຫ້ທະນາຄານແຫ່ງ ສປປ ລາວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງພິຈາລະນາແລ້ວແຈ້ງໃຫ້ບັນດາທະນາຄານທຸລະກິດຊາບເພື່ອປະຕິບັດ.

5. ແຕ່ລະທະນາຄານຕ້ອງແຕ່ງຕັ້ງພະນັກງານຢ່າງໜ້ອຍ 2 ຄົນ ຮັບຜິດຊອບວຽກງານປ້ອງກັນຄວາມສະຫງົບ ແລະ ຕ້ອງແຈ້ງລາຍຊື່ ແລະ ເບີໂທລະສັບ ໃຫ້ຄະນະປ້ອງກັນທະນາຄານທົ່ວລະບົບ ເພື່ອຄວາມສະດວກໃນການຕິດຕໍ່ປະສານງານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

ສົມພາວ ໄຟສິດ

ບ່ອນສົ່ງ:

- ບັນດາທະນາຄານທຸລະກິດ.
- ສາຂາທະນາຄານຕ່າງປະເທດ
- ຫ້ອງການຄະນະຮັບຜິດຊອບວຽກງານປ້ອງກັນທະນາຄານທົ່ວລະບົບ